ບັນດາອົງການຈັດຕັ້ງຊຸມຊົນ

United States Census 2010

ສຳມະໂນຄົວຂອງ
ສະຫະລັດອາເມຣິກາ

ມັນຢູ່ໃນຄວາມຮັບຜິດຊອບ
ຂອງພວກເຮົາທຸກຄົນ

ສຳນັກງານສຳຫຼວດປະຊາກອນແຫ່ງສະຫະຣັດ
ອາເມຣິກາກຳລັງຮຽກຮ້ອງໃຫ້ດຳເນີນການ
ເພື່ອເຮັດໃຫ້ຜູ້ອາໃສຢູ່ໃນປະເທດເຮົາທຸກຄົນ:

# "ຖືກນັບເຂົ້າໃນຈຳນວນປະຊາກອນປີ 2010."

## ການສຳຫຼວດປະຊາກອນ: ຄຳອະທິບາຍໂດຍຫຍໍ້

- **ແມ່ນຫຍັງ:** ການສຳຫຼວດປະຊາກອນແມ່ນການນັບທຸກໆຄົນທີ່ອາໃສຢູ່ໃນສະຫະຣັດ.
- **ແມ່ນໃຜ:** ຜູ້ອາໃສໃນສະຫະຣັດທຸກຄົນຕ້ອງໄດ້ຖືກນັບເຂົ້າຄົນທຸກເຊື້ອຊາດ ແລະ ທຸກຊົນເຜົ່າ, ທັງຜູ້ເປັນສັນຊາດສະຫະຣັດ ແລະ ຜູ້ບໍ່ເປັນສັນຊາດສະຫະຣັດ.
- **ເມື່ອໃດ:** ມື້ສຳຫຼວດປະຊາກອນແມ່ນວັນທີ 1 ເມສາ 2010. ຄຳຕອບຈາກແບບສອບຖາມຈະສະແດງເຖິງສະພາບຄົວເຮືອນທີ່ມີຢູ່ຈົນຮອດວັນນັ້ນ. ໃນທຸກໆປີຂໍ້ມູນເສດຖະກິດສັງຄົມທີ່ລະອຽດກວ່າຈະຖືກເກັບກຳນຳກຸ່ມຕົວຢ່າງສ່ວນນ້ອຍໜຶ່ງຂອງປະຊາກອນໂດຍຜ່ານ **ການສຳຫຼວດຊຸມຊົນຊາວອາເມຣິກາ.**
- **ຍ້ອນຫຍັງ:** ຣັດຖະທຳມະນູນສະຫະຣັດໄດ້ກຳນົດໃຫ້ມີການສຳຫຼວດປະຊາກອນທົ່ວປະເທດໜຶ່ງຄັ້ງໃນທຸກໆ 10 ປີ. ການສຳຫຼວດນີ້ຈະສະແດງໃຫ້ເຫັນຈຳນວນປະຊາກອນໃນແຕ່ລະຣັດ ແລະ ກຳນົດຈຳນວນຜູ້ແທນໃນສະພາຜູ້ແທນຂອງ ສະຫະຣັດ.
- **ແນວໃດ:** ແບບສອບຖາມການສຳຫຼວດປະຊາກອນຈະຖືກຈັດສົ່ງໃຫ້ເຖິງເຮືອນ ຫຼື ຝາກທາງໄປສະນີໄປໃຫ້ຄົວເຮືອນໂດຍ ຜ່ານໄປສະນີສະຫະຣັດ ໃນເດືອນມີນາ ປີ 2010; ຄົວເຮືອນຫຼາຍຄົວຈະໄດ້ຮັບແບບສອບຖາມປ່ຽນແທນໃນຕົ້ນເດືອນເມສາ. ພະນັກງານສຳຫຼວດປະຊາກອນຈະໄປຢ້ຽມຢາມຄົວເຮືອນທີ່ບໍ່ໄດ້ສົ່ງແບບສອບຖາມຄືນນັ້ນ.

## ການນັບຈຳນວນທີ່ຄົບຖ້ວນສົມບູນ: ຄວາມສຳຄັນຂອງຂໍ້ມູນຈາກສຳຫຼວດປະຊາກອນ

- ໃນທຸກໆປີ, ຣັດຖະບານກາງສາມາດຈັດສັນງົບປະມານຫຼາຍກວ່າ $400 ຕື້ໃຫ້ແກ່ບັນດາຣັດ ແລະ ຊຸມຊົນຕ່າງໆ ໂດຍສ່ວນໜຶ່ງກໍອີງໃສ່ ຂໍ້ມູນສຳຫຼວດປະຊາກອນ.
- ຂໍ້ມູນສຳຫຼວດປະຊາກອນສາມາດໃຊ້ເຂົ້າໃນການຂຽນບົດສະເໜີຂໍທຶນຊ່ວຍເຫລືອ.
- ຜູ້ວາງແຜນພັທນາຊຸມຊົນ ແລະ ການປົກຄອງສາມາດອີງໃສ່ຂໍ້ມູນສຳຫຼວດປະຊາກອນເພື່ອກຳນົດວ່າບ່ອນໃດຕ້ອງການຄວາມຊ່ວຍເຫລືອໃນດ້ານການບໍລິການສັງຄົມ ແລະ ເງິນທຶນເພີ້ມເຕີມ.
- ຂໍ້ມູນສຳຫຼວດປະຊາກອນສາມາດຊ່ວຍທ່ານ ປະເມີນຈຳນວນຜູ້ອາສາສະໝັກຢູ່ໃນຊຸມຊົນຂອງທ່ານ ແລະ ຈຳນວນປະຊາຊົນທີ່ຢູ່ອາໃສໃນຊຸມຊົນທີ່ຕ້ອງ ການການບໍລິການຂອງທ່ານ.

## ແບບສອບຖາມການສຳຫຼວດປະຊາກອນປີ 2010: ວ່ອງໄວ, ງ່າຍດາຍ ແລະ ເປັນຄວາມລັບ

- ເພາະມີພຽງແຕ່ 10 ຄຳຖາມເທົ່ານັ້ນ, ແບບສອບຖາມການສຳຫຼວດປະຊາກອນ 2010 ຈຶ່ງແມ່ນໜຶ່ງໃນແບບສອບຖາມທີ່ສັ້ນທີ່ສຸດໃນປະຫວັດສາດ ແລະ ໃຊ້ເວລາເຮັດສຳເຣັດພຽງແຕ່ 10 ນາທີເທົ່ານັ້ນ.
- ຕາມກົດໝາຍ, ສຳນັກງານສຳຫຼວດປະຊາກອນບໍ່ສາມາດເປີດເຜີຍຄຳຕອບໃນແບບສອບຖາມການສຳຫຼວດປະຊາກອນຂອງບຸກຄົນໃຫ້ບຸກຄົນໃດໆຮູ້ທັງນັ້ນ, ລວມທັງອົງການອື່ນໆຂອງຣັດຖະບານກາງ ແລະ ໜ່ວຍງານປະຕິບັດກົດໝາຍ.

### ການສຳຫຼວດປະຊາກອນປີ 2010 ມີຄວາມສຳຄັນຫຼາຍ.

ມັນກຳນົດການຈັດສັນແຈກຈ່າຍງົບປະມານຂອງຣັດຖະບານ ຫຼາຍກວ່າ $400 ຕື້ ໃນແຕ່ລະປີ ເພື່ອໃຊ້ຈ່າຍເຂົ້າໃນການບໍຣິການຊຸມຊົນທີ່ສຳຄັນຕ່າງໆ. ການສຳຫຼວດນີ້ສ້າງວຽກເຮັດງານທຳຈຳນວນຫຼາຍພັນຕຳແໜ່ງໃນທົ່ວປະເທດ. ແລະ ມັນມີຜົນກະທົບຕໍ່ ການໃຊ້ສິດສຽງຂອງທ່ານໃນຣັຖສະພາສະຫະຣັດ (Congress).

### ທ່ານສາມາດຊ່ວຍສ້າງໃຫ້ເກີດຄວາມແຕກຕ່າງໄດ້.

ໃນນາມທີ່ເປັນຜູ້ນຳອົງການຈັດຕັ້ງຊຸມຊົນທີ່ມີຄວາມສາມາດຊັກຈູງຈິດໃຈຄົນ, ທ່ານສາມາດຊ່ວຍຮັບປະກັນວ່າປະຊາຊົນທີ່ທ່ານຕາງໜ້າໃຫ້ໄດ້ຖືກນັບເຂົ້າໃນສະຖິຕິຂອງປະຊາກອນຢ່າງຄົບຖ້ວນ. ດ້ວຍຄວາມຊ່ວຍເຫຼືອຂອງທ່ານ, ສຳນັກງານສຳຫຼວດປະ ຊາກອນຈະສືບຕໍ່ສ້າງຂໍ້ມູນທີ່ຖືກຕ້ອງແມ້ນຢຳ ເຊິ່ງຈະສົ່ງຜົນກະທົບໂດຍກົງຕໍ່ກັບຄຸນນະພາບຊີວິດການເປັນຢູ່ໃນຊຸມຊົນຂອງທ່ານ.

2010 CENSUS
ມັນຢູ່ໃນຄວາມຮັບຜິດຊອບ
ຂອງພວກເຮົາທຸກຄົນ

# ການສຳຫຼວດປະຊາກອນປີ 2010: ສັງລວມໂດຍຫຍໍ້ກ່ຽວກັບຜູ້ຮ່ວມງານ

United States Census 2010
ສຳມະໂນຄົວຂອງສະຫະລັດອາເມຣິກາ
ມັນຢູ່ໃນຄວາມຮັບຜິດຊອບຂອງພວກເຮົາທຸກຄົນ

## ການເປັນຜູ້ຮ່ວມງານການສຳຫຼວດປະຊາກອນປີ 2010

**ການເປັນຜູ້ຮ່ວມງານຂອງທ່ານແມ່ນການສົ່ງສັນຍານອັນຊັດເຈນຫາຊຸມຊົນຂອງທ່ານໃຫ້ເຫັນ ເຖິງຄວາມສຳຄັນຂອງການສຳຫຼວດປະຊາກອນ ແລະ ຜົນປະໂຫຍດຂອງການຖືກນັບເຂົ້າໃນຈຳນວນປະຊາກອນ.** ໂດຍການເປັນຜູ້ຮ່ວມງານກັບສຳນັກງານສຳຫຼວດປະຊາກອນ, ທ່ານສາມາດຊ່ວຍ:

- ຮັບປະກັນໃຫ້ຂໍ້ມູນສຳຫຼວດປະຊາກອນຖືກຕ້ອງແມ້ນຢຳ, ເຊິ່ງຈະເປັນບ່ອນອີງໃຫ້ແກ່ການຕັດສິນຈັດສັນງົບປະມານໃຫ້ກັບຊຸມຊົນຂອງທ່ານ ແລະ ມີຜົນກະທົບຕໍ່ກັບຜູ້ແທນຂອງທ່ານໃນຣັຖສະພາສະຫະຣັດ (Congress).
- ບອກເລົ່າກ່ຽວກັບວຽກເຮັດຊົ່ວຄາວໃນການສຳຫຼວດປະຊາກອນໃນຊຸມຊົນຂອງທ່ານ.
- ຮັບປະກັນຕໍ່ຜູ້ຄົນວ່າ ການຕອບແບບສອບຖາມການສຳຫຼວດປະຊາກອນແມ່ນມີປອດໄພ.

## ດຳເນີນການເພື່ອຊຸມຊົນ ແລະ ປະເທດຂອງທ່ານ

ໃນຖານະເປັນຜູ້ຮ່ວມງານ, ທ່ານມີບົດບາດສຳຄັນໃນການເຮັດໃຫ້ການສຳຫຼວດປະຊາກອນປີ 2010 ສຳເລັດຜົນ ໂດຍການສົ່ງເສີມໃຫ້ຜູ້ຄົນໃນຊຸມຊົນຂອງທ່ານເຂົ້າຮ່ວມໃນການນັບຈຳນວນປະຊາກອນ. ທ່ານສາມາດ:

- ຕອບຄຳຖາມແລະ ຊ່ວຍເຮັດໃຫ້ຄົນມີຄວາມເຂົ້າໃຈຖືກຕ້ອງກ່ຽວກັບການສຳຫຼວດ ປະຊາກອນປີ 2010. ບອກໃຫ້ເຂົາເຈົ້າຮູ້ຈັກຜົນປະໂຫຍດຂອງການ ທີ່ຖືກນັບ ເອົາໃນເວລາສຳຫລວດ ແລະ ຄ້ຳປະກັນກັບຊຸມຊົນເພື່ອໃຫ້ເຂົາເຈົ້າໝັ້ນໃຈວ່າ ຄຳຕອບໃນແບບຟອມຄຳຖາມຂອງເຂົາເຈົ້າຈະຖືກຮັກສາໄວ້ ເປັນຄວາມລັບ.
- ເອົາຂໍ້ມູນການສຳຫຼວດປະຊາກອນ ປີ 2010 ເຂົ້າໃນຈົດໝາຍຂ່າວ, ກະດານຕິດຂ່າວ, ຢູ່ໃນບ່ອນຮັບຕ້ອນແຂກ ແລະ ສື່ສານທາງອິນເຕີເນັດຕ່າງໆ.
- ຊ່ວຍໃນການລະດົມຄົນມາສະມັກໃນຕຳແໜ່ງເປັນພະນັກງານສຳຫຼວດປະຊາກອນ ປີ 2010, ສະໜອງວຽກງານໃຫ້ແກ່ຜູ້ທີ່ຕ້ອງການວຽກຢູ່ໃນຊຸມຊົນຂອງທ່ານ.
- ຈັດຫາສະຖານທີ່ ສຳລັບທຳການນັບ (Be Counted) ແລະ ສູນຊ່ວຍເຫຼືອແບບສອບຖາມການສຳຫຼວດ ຫຼື ສະຖານທີ່ສຳລັບທົດສອບ ແລະ ຝຶກອົບຮົມພະນັກງານສຳຫຼວດປະຊາກອນ.
- ອອກການປ່າວປະກາດ ຫຼື ການສະໜັບສະໜູນການສຳຫຼວດປະຊາກອນປີ 2010 ໃນຮູບແບບອື່ນໆ.
- ສ້າງຕັ້ງຄະນະກຳມະການນັບຈຳນວນປະຊາກອນຄົບຖ້ວນສົມ ບູນ (CCC) ຢູ່ ໃນ ເຂດຂອງທ່ານ ແລະ ເຊື້ອເຊີນເອົາຜູ້ນຳຊຸມຊົນທີ່ມີອິດທິພົນຄອບງຳເພື່ອ ຮ່ວມມືກັບທ່ານໃນການພະຍາຍາມເຮັດໃຫ້ມີການເຂົ້າຮ່ວມໃນການສຳຫຼວດປະຊາກອນເພີ້ມຂຶ້ນ.

## ການສຳຫຼວດປະຊາກອນປີ 2010: ວັນທີທີ່ສຳຄັນ

| | |
|---|---|
| **ລະດູໃບໄມ້ລົ່ນ ປີ 2008** | ເລີ້ມລະດົມຄົນມາສະມັກເຮັດວຽກສຳຫຼວດປະຊາກອນໃນທ້ອງຖິ່ນເພື່ອດຳເນີນການສຳຫຼວດປະຊາກອນຂັ້ນຕົ້ນ. |
| **ລະດູໃບໄມ້ປົ່ງ ປີ 2009** | ພະນັກງານຂອງການສຳຫຼວດປະຊາກອນ ໄປເຄາະປະຕູແຕ່ລະເຮືອນເພື່ອຈະປັ່ງນລາຍຊື່ຂອງທີ່ຢູ່ໃນທົ່ວປະເທດໃຫ້ຖືກກັບສະພາບປັດຈຸບັນ. |
| **ລະດູໃບໄມ້ລົ່ນ ປີ 2009** | ເລີ້ມລະດົມຄົນມາສະມັກເປັນຜູ້ສຳຫຼວດປະຊາກອນເພື່ອຊ່ວຍໃນເວລາທີ່ມີວຽກຫລາຍສຸດໃນປີ 2010. |
| **ເດືອນ ກຸມພາ - ມີນາ ປີ 2010** | ສົ່ງແບບສອບຖາມການສຳຫຼວດປະຊາກອນໂດຍທາງໄປສະນີ ໄປຫາທຸກໆຄອບຄົວ. |
| **ວັນທີ 1 ເມສາ 2010** | ມື້ສຳຫຼວດປະຊາກອນ |
| **ເດືອນ ພຶດສະພາ - ກໍລະກົດ ປີ 2010** | ຜູ້ສຳຫຼວດປະຊາກອນອອກໄປຫາເຮືອນທີ່ບໍ່ໄດ້ສົ່ງແບບສອບຖາມການສຳຫຼວດຄືນ ໂດຍທາງໄປສະນີ. |
| **ເດືອນ ທັນວາ ປີ 2010** | ຕາມກົດໝາຍ, ສຳນັກງານສຳຫຼວດປະຊາກອນ ສົ່ງການນັບຈຳນວນປະຊາກອນທີ່ຄົບຖ້ວນໃຫ້ແກ່ປະທານາທິບໍດີເພື່ອໃຊ້ໃນການຈັດແບ່ງຈຳນວນຜູ້ແທນຂອງແຕ່ລະຣັດ. |
| **ເດືອນ ມີນາ ປີ 2011** | ຕາມກົດໝາຍ, ສຳນັກງານສຳຫຼວດປະຊາກອນ ສົ່ງຂໍ້ມູນກ່ຽວກັບການຈັດແບ່ງເຂດເລືອກຕັ້ງໃໝ່ໃຫ້ແກ່ທຸກໆຣັດ. |

## ການນັບຢ່າງຄົບຖ້ວນສົມບູນ ແລະ ແມ້ນຢຳ ມັນຢູ່ໃນຄວາມຮັບຜິດຊອບຂອງພວກເຮົາທຸກຄົນ.

**ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ ການສຳຫຼວດປະຊາກອນ ປີ 2010, ໃຫ້ໄປເບິ່ງ ໃນເວັບໄຊ 2010census.gov.**

2010 CENSUS
ມັນຢູ່ໃນຄວາມຮັບຜິດຊອບຂອງພວກເຮົາທຸກຄົນ

Issued August 2009
Form D-3236 (L)

U.S. Department of Commerce
Economics and Statistics Administration
U.S. CENSUS BUREAU